ນິທານຊາດົກ ຊຸດມໍລະດົກວຽງຈັນ

# ທ້າວ ມະຫາຊະນົກ

ແປຈາກຄຳພີ ທະສະຊາຕະກະ
ແລະແຕ່ງເປັນຄຳກອນພາສາລາວ
ໂດຍ ມະຫາສີລາ ວີຣະວົງສ໌



ຈັດພິມໂດຍ
ໂຄງການພຸດທະສາສະໜາ ເພື່ອການພັດທະນາ (ຄ.ພ.ພ)

ນິທານຊາດົກ ຊຸດນໍລະດົກວຽງຈັນ

ເລື່ອງ

# ທ້າວ ມະຫາຊະນົກ

ແປງຈາກຄໍາພີ ທະສະຊາຕະກະ

ແລະແຕ່ງເປັນກອນ

ໂດຍ

**ມະຫາສີລາ ວີຣະວົງສ໌**



**ຊະນະກະຊາຕະກະ**

ເລື່ອງ ທ້າວມະຫາຊະນົກ

ແປງຈາກຄຳພີ ທະສະຊາຕະກະ ແລະແຕ່ງເປັນຄຳກອນພາສາລາວ ໂດຍ ມະຫາສິລາ ວີຣະວົງສ໌

ເປັນຂອງ ຫໍພຣະສະໝຸດປະເທດລາວ


ພິມເທື່ອທີ 1:  2000 ສະບັບ ພຸດທະສັກລາດ ໒໔໗໕ (ກິດຕະສັງກາດ 1932)

ຈັດພິມຄັ້ງທີ 2: ຈຳນວນ 2000  ຫົວ ປີ 2014 ໂດຍ ໂຄງການພຸດທະສາສະໜາເພື່ອການພັດທະນາ (ຄ.ພ.ພ)

ພິມຄືນຈາກຕົ້ນສະບັບອັດສຳເນົາ  ໂດຍ ດວງເດືອນ ບຸນຍາວົງ

ແປສັບຍາກ ໂດຍພຣະອາຈານ ສີສຸກ ສະເຫຼີມຄຸນ, ພຣະອາຈານ ຈັນທະວີສຸກ ລັດຕະນາ

ອອກແບບ ແລະຈັດໜ້າໂດຍ: ຄຳວຽງ ພົມມະຈັນ

ກອງບັນນາທິການ: ດາຣາ ກັນລະຍາ ວີຣະວົງສ໌

ດວງເດືອນ ບຸນຍາວົງ

ຄຳວຽງ ພົມມະຈັນ

ຮູບປະກອບເດີມຂອງ ຍາພໍ່ທິດພຸ



ສຳນັກງານ ຄ.ພ.ພ  ມະຫາກຸຕິ ວັດທາດຫຼວງເໜືອ ໂທລະສັບ (+856)21 453 944, ມືຖື (+856) 20 2222 8440

E-mail: bdp.laos@yahoo.com     website: www.laobdp.org



ນະຄອນຫຼວງວຽງຈັນ ສ.ປ.ປ.ລາວ, 2014

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ມະຫາສິລາ ວີຣະວົງສ໌

ທ້າວ ມະຫາຊະນົກ / ມະຫາສິລາ ວີຣະວົງສ໌, ພິມຄັ້ງທີ 2. -- ສຳນັກພິມ ດອກເກດ ແລະ (ຄ.ພ.ພ), 2014.

112 ໜ້າ: ພາບປະກອບສີ; 25 ຊມ. (ຊຸດນິລະດົກວຽງຈັນ)

1. ນິທານພື້ນເມືອງລາວ. 2. ລາວ -- ນິທານພື້ນເມືອງ, ຜູ້ແຕ່ງ. I. ຊື່ເລື່ອງ

398.204594 --dc21

ISBN 978-9932-07-041-1

ເລກທະບຽນພິມຈຳໜ່າຍ: 468/ພຈ 18112014

ນິທານຊາດົກ ຊຸດມໍລະດົກວຽງຈັນ

# ທ້າວ ມະຫາຊະນົກ

ແປງຈາກຄຳພີ ທະສະຊາຕະກະ ແລະແຕ່ງເປັນກອນ

## ໂດຍ ມະຫາສີລາ ວີຣະວົງສ໌



ຈັດພິມໂດຍ
ໂຄງການພຸດທະສາສະໜາເພື່ອການ ພັດທະນາ(ຄ.ພ.ພ)
ກັນຍາ 2014

# ສາລະບານ

ໜ້າ


| | |
|---|---|
| ຄຳສະເໜີ ຂອງສຳນັກພິມ | 5 |
| ຄຳສະເໜີ ຂອງ ພຣະອາຈານ ສີທົນ ໄຊຍະວົງສອນ | 7 |
| ຄຳນຳ ຂອງຜູ້ແຕ່ງ | 9 |
| ໑. ອາລຳພະກະຖາ (ນະມັດຖຸ) | 11 |
| ໒. ຍຸດທະກຳບັ້ນ | 15 |
| ໓. ຈິລັບປະວາສີບັ້ນ | 23 |
| ໔. ພິນນະນາວາບັ້ນ | 35 |
| ໕. ເມຂະລາບັ້ນ | 41 |
| ໖. ອາວະທະມັງຄະລາບັ້ນ | 45 |
| ໗. ໂສລະສະບັນທາ | 57 |
| ໘. ທັມມະເທສໜາບັ້ນ | 65 |
| ໙. ສັງເວໂຄບັ້ນ | 75 |
| ໑໐. ວິຕັກກະວິຈາລະບັ້ນ | 81 |
| ໑໑. ປະລິເທວະນາບັ້ນ | 89 |
| ໑໒. ສະໂມທານະກະຖາ | 102 |
| ອະທິບາຍຄຳສັບ | 104 |
| ລາຍຊື່ເຈົ້າສັດທາ | 113 |

# ຄຳສະເໜີ ຂອງສຳນັກພິມ

ນິທານຊາດົກຄຳກອນເລື່ອງ ມະຫາຊະນົກ ແລະ ສຸວັນນະສາມ ເຄີຍຈັດພິມເປັນເຫຼັ້ມໂດຍພຸດທະບັນດິດສະພາຈັນທະບຸລີ ປີ1932 ເພື່ອໃຊ້ເປັນປຶ້ມອ່ານປະກອບຂອງໂຮງຮຽນປາລີ ໃນ ສະໄໝນັ້ນ ຕໍ່ມາໃນປີ 1972 ເຊິ່ງເປັນປີນານາຊາດຂອງປຶ້ມ(International Year Book) ຫໍສະໝຸດແຫ່ງຊາດໄດ້ນຳເອົາ ເລື່ອງທ້າວສຸວັນນະສາມ ມາຈັດພິມ ເພື່ອຮັກສາຂອງເກົ່າໄວ້. ແຕ່ການຈັດພິມຢ່າງສົມບູນໂດຍມີພາບປະກອບສວຍງາມອັນດັ້ງເດີມຂອງຍາພໍ່ທິດພຸ ຍັງບໍ່ເຄີຍໄດ້ເຮັດຈັກເທື່ອ.

ເມື່ອຈັດພິມເລື່ອງທ້າວເຕມນັ້ນ ຂ້າພະເຈົ້າໂຊກດີ ໄດ້ປຶ້ມຕົ້ນສະບັບນຳ ດຣ. ບຸນທຽງ ສິຣິປະພັນ ແຕ່ສຳລັບເລື່ອງ ທ້າວສຸວັນນະສາມ ນີ້ ຂ້າພະເຈົ້າມີພຽງສຳເນົາປຶ້ມ ຂາວດຳເທົ່ານັ້ນ ດັ່ງນັ້ນຈຶ່ງ ສະເໜີ ອາຈານຕຽນ ວິໄລພອນຈິດ ແຕ້ມຄືນຕາມລາຍເສັ້ນເກົ່າຂອງເພິ່ນ. ສ່ວນເລື່ອງ ມະຫາຊະນົກ ໄດ້ ຈັດເຝິກອົບຮົມແຕ້ມຄືນຕັ້ງແຕ່ປີ 2011 ແລ້ວ. ແຕ່ມາຮອດ ຕົ້ນປີ 2013, ພຣະອາຈານໄພວັນ ມາລາວົງ ໄດ້ປຶ້ມທີ່ພິມໄວ້ແຕ່ກ່ອນມາໃຫ້ ຈຶ່ງໄດ້ສະແກນ ເອົາຮູບເດີມມາໃສ່ໄວ້ໃນເຫຼັ້ມ ທີ່ຈະຈັດພິມໃໝ່.

ດັ່ງທີ່ ທ່ານຜູ່ປະພັນໄດ້ເວົ້າໃນທຳນອງວ່າ ທ່ານເອງຍັງບໍ່ພໍໃຈໃນຄຳປະພັນຂອງທ່ານເທົ່າໃດ ແລະຍ້ອນວ່າພວກເຮົາເອງທີ່ເປັນລູກ ກໍບໍ່ໄດ້ມີພູມປັນຍາທາງພະພຸດທະສາສະໜາ ພໍທີ່ຈະຊຳລະສະສາງໄດ້ ທີ່ເຮັດໄດ້ແດ່ກໍແຕ່ການສະກົດຄຳ(ອັກຂະລະວິທີ) ສັນທະລັກສະນະຄື ຈັດແບ່ງບາດ-ວັກ ແລະໃສ່ໝາຍເລກແຕ່ບະບາດໄວ້ ເພື່ອສະດວກໃນການອ້າງເຖິງ. ເພື່ອຊ່ອຍຜູ່ທີ່ບໍ່ທັນລຶ້ງກັບການອ່ານນິທານຊາດົກ ຈຶ່ງໄດ້ເລືອກເຟັ້ນຄຳສັບຈຳນວນນຶ່ງ ມາແປອະທິບາຍໄວ້ທ້າຍເຫຼັ້ມ ໂດຍໄດ້ຮັບຄວາມເມດຕາຈາກ ພຣະອາຈານ ສີສຸກ ສະເຫຼີມຄຸນ (ວັດສາລາແດງ) ນະຄອນຫຼວງວຽງຈັນ ຊ່ອຍ ແປຂະຫຍາຍຄວາມໃຫ້.

ໂດຍເຫັນໄດ້ຄວາມສຳຄັນຂອງນິທານຊາດົກຄຳກອນຊຸດນີ້ ພຣະອາຈານ ສີທົນ ໄຊຍະວົງສອນ ປະທານ ຄ.ພ.ພ. ຈຶ່ງໄດ້ລະດົມທຶນສັດທາ ມາຈັດພິມໃຫ້ເປັນທັມມະທານເນື່ອງໃນວາລະຄົບຮອບຊາຕະການ110 ປີ ຂອງມື້ລາງ ທ່ານມະຫາສິລາ ວີຣະວົງສ໌ ໃນປີ ຄ.ສ. 2015 ແລະ ພວກລູກຫຼານສິດສານຸສິດ ກໍໄດ້ມີສັດທາຮ່ວມອີກຈຳນວນນຶ່ງ ອັນເຮັດໃຫ້ຈຳນວນຈັດພິມຫຼາຍຂຶ້ນ ທັງນີ້ເພື່ອຊ່ອຍກັນສືບທອດເຜີຍແຜ່ທັມມະ ທີ່ແຝງຊ້ອນຢູ່ໃນເລື່ອງນີ້ໃຫ້ກວ້າງຂວາງຕື່ມຂຶ້ນ ພ້ອມດຽວກັນກໍເປັນການອະນຸຮັກສົ່ງເສີມການແຕ່ງກອນນິທານທະສະຊາດລາວໃຫ້ຍືນຍົງຄົງຕົວ ແລະເປັນແບບຢ່າງແກ່ພຣະສົງນັກກະວີຮຸ່ນໃໝ່ນຳອີກ.

ດັ່ງນັ້ນ ຈຶ່ງຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອ ຕໍ່ຄູບາອາຈານທຸກທ່ານທຸກອົງ ລູກຫຼານຍາດມິດທຸກຄົນ ທີ່ໄດ້ມີສ່ວນເຮັດໃຫ້ການຈັດພິມຄັ້ງນີ້ ສຳເລັດຕາມຄວາມມຸ່ງມາດປາຖະໜາ. ກຸສົນຜົນບຸນໃດໆ ທີ່ຈະບັງເກີດຂຶ້ນທັງໃນປັດຈຸບັນນະການ ຫຼືໃນອະນາຄົດຕະການກໍດີ ຂໍອຸທິດໃຫ້ ບຸພະການີ ແລະບຸພາຈານທັງມວນດ້ວຍ.

ທີ່ສຳນັກພິມ ດອກເກດ ຕຸລາ 2014

ນາງ ດວງເດືອນ ວີຣະວົງສ໌ ບຸນຍາວົງ

# ຄຳເຫັນຂອງ ພຣະອາຈານ ສີທົນ ໄຊຍະວົງສອນ

ວ່າການຫົວໜ້າກັມມາທິການເຜີຍສີລະທັມ ແລະປະຕິບັດວິປັດສະນາກັມມະຖານ, ປະທານ ຄ.ພ.ພ.
ເຈົ້າອະທິການວັດປ່າ ນາຄູນນ້ອຍ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ

## ຄວາມສຳຄັນຂອງນິທານຊາດົກ ຕໍ່ການສຶກສາພຸດທະສາສະໜາ

ທົດສະຊາດຊາດົກ ເປັນໜັງສືທີ່ທາງ ຄ.ພ.ພ. ໄດ້ໃຫ້ຄວາມສຳຄັນຈັດພິມຂຶ້ນເພື່ອຕອບສະໜອງ ແລະເສີມຕື່ມຄວາມຮູ້ທາງດ້ານພຸດທະສາສະໜາ ເຊິ່ງຄົນລາວເຮົານັບຖື ກວມເອົາເປີເຊັນຫຼາຍກວ່າໝູ່ໃນບັນດາໜັງສືສາສະໜາທັງປວງຢູ່ ສ.ປ.ປ.ລາວ. ເນື່ອງຈາກວ່າປັດຈຸບັນນີ້ ອອກຕົນຍາດໂຍມ ນັກຮຽນນັກສຶກສາສ່ວນນຶ່ງ ຍັງບໍ່ເຫັນເຖິງຄວາມສຳຄັນຂອງການບຳເພັນພຽນປາຣະມີຂອງພຣະພຸດທະເຈົ້າ ຢ່າງເລິກເຊິ່ງແທ້ຈິງ ແລະຍັງສະແດງວ່າເປັນພຽງຄວາມນິຍົມຊົມຊອບໃນການ ທີ່ຈະໄດ້ເປັນສັດທາແຕ້ມຮູບເລື່ອງທົດສະຊາດລົງໃສ່ຝາຜະໜັງສິມ ແລະສາລາເທົ່ານັ້ນ ແຕ່ຍັງຂາດຂໍ້ມູນທີ່ເປັນຮາກເຫງົ້າຂອງເນື້ອເລື່ອງຫົວໃຈຂອງເຫດການ ທີ່ເຮັດໃຫ້ເຈົ້າຊາຍອົງນຶ່ງໄດ້ກາຍມາເປັນພຣະພຸດທະເຈົ້າ ຫຼື ພຣະສາສະດາແຫ່ງສາສະໜາພຸດ ທີ່ນັບຖືກັນມາເທົ້າເຖິງປັດຈຸບັນນີ້.

ນິທານທົດສະຊາດທັງໝົດ ນອກຈາກໄດ້ພັນລະນາເຖິງການບຳເພັນພຽນໃນຊາດນຶ່ງໆທີ່ພຣະພຸດທະອົງໃຊ້ຊາດເປັນພຣະໂພທິສັດແລ້ວ ຍັງສອດແຊກຫຼັກທັມຄຳສອນຫຼາຍຢ່າງ ເຊິ່ງສະແດງເຖິງປາລະມີ 30 ທັດ ແລະປິດສະໜາທັມ ຕະຫຼອດເຖິງການດຳລົງຊີວິດທີ່ດີງາມອີກດ້ວຍ.

ການທີ່ ຄ.ພ.ພ.ຈັດພິມໜັງສືຊຸດນີ້ອອກມາ ກໍເພື່ອແຈກຢາຍເຜີຍແຜ່ໃຫ້ເປັນທັມມະທານແກ່ຜູ້ໃຝ່ຮູ້ໃຝ່ຮຽນທັງຫຼາຍ ທັງເປັນການສືບສານຜົນງານຂອງບຸພາຈານ ໃຫ້ເປັນປະໂຫຍດແລະເປັນແບບຢ່າງແກ່ຜູ້ສືບທອດພຣະພຸດທະສາສະໜາຮຸ່ນໃໝ່ໄວ້ ໃຫ້ສົມກັບຄຳມຸ່ງຫວັງ ຂອງອະດີດເຈົ້າມະຫາອຸປະຮາດເພັດຊະຣາດ ອົງນາຍົກແຫ່ງພຸດທະບັນດິດສະພາຈັນທະບຸຣີ ແລະທ່ານຜູ້ແຕ່ງຄື ມົ້ລາງອາຈານ ມະຫາສີລາ ວີຣະວົງສ໌ ທີ່ໝາຍໝັ້ນຢາກໃຫ້ມີທົດສະຊາດຊາດົກ ຫຼື ນິທານຊາດົກ(ລາວ) ທັງ10 ເລື່ອງ ໃນຮູບກອນພາສາລາວງ່າຍໆ ອອກມາເຜີຍແຜ່ຢ່າງກວ້າງຂວາງສູ່ມະຫາຊົນ.

ອີກປະການນຶ່ງໂອກາດຈັດພິມຄັ້ງນີ້ ຍັງມີຄວາມໝາຍສຳຄັນພິເສດອີກ ດ້ວຍວ່າໃນປີ ພ.ສ. 2558 ນີ້ ເປັນວາລະຄົບຮອບຊາຕະການ 110 ປີ ຂອງມົ້ລາງມະຫາສີລາ ວີຣະວົງສ໌ (2448-2530) ເຊິ່ງບັນດາພຸດທະສິດສານຸສິດ ແລະລູກຫຼານຍາດຕິພີ່ນ້ອງຈະໄດ້ຮ່ວມກັນເຮັດບຸນລະນຶກເຖິງເພິ່ນ ໃຫ້ເປັນສິລິມຸງຄຸນສືບຕໍ່ໄປ.

ດັ່ງນັ້ນເນື່ອງໃນວາລະອັນມີຄວາມໝາຍນີ້ ອາຕະມາພາບ ໃນຖານະປະທານຂອງ ຄ.ພ.ພ. ກໍຄື ຊາວພຸດທະບໍລິສັດທັງຫຼາຍ ທີ່ເປັນຜູ້ສືບທອດພຣະພຸດທະສາສະໜາໂດຍກົງ ຮ່ວມກັບລູກຫຼານຍາຕິກາວົງສາຂອງທ່ານ ຈຶ່ງໄດ້ໂຮມສັດທາມາຈັດພິມນິທານຊາດົກຄຳກອນທັງສາມເລື່ອງ ຄື ສຸວັນນະສາມ, ມະຫາຊະນົກ ແລະເວດສັນດອນ(ກອນຮ່າຍ)ອັນຜົນງານເກົ່າແກ່ທາຍາກຂອງທ່ານອອກມາເຜີຍແຜ່ແກ່ສາທຸຊົນສືບຕໍ່ໄປ.

ຂໍໃຫ້ເຈຕະນາຣົມ ຂອງບັນດາເຈົ້າສັດທາທີ່ມີສ່ວນຮ່ວມໃນການຈັດພິມຄັ້ງນີ້ ບັນລຸອັດຖະປະໂຫຍດ ອັນຈະນຳເອົາຄວາມສຸກສະຫງົບ ມາສູ່ຈິດໃຈໃນກາລະຕໍ່ໄປດ້ວຍເຖີ້ນ.

ທີ່ ມະຫາກະດີ ວັດທາດຫຼວງເໜືອ ເມືອງໄຊເຊດຖາ ນະຄອນຫຼວງວຽງຈັນ
ເດືອນຕຸລາ ພ.ສ. 2557
ພຣະອາຈານ ສີທົນ ໄຊຍະວົງສອນ

24 / VII
ห้ามจำหน่าย

# ຄຳນຳຜູ່ແຕ່ງ

ມະຫາຊະນົກເປັນເລື່ອງທີ ໘ ຕໍ່ຈາກເລື່ອງເຕມິຍະກຸມມານ. ມະຫາຊະນົກນີ້ ປາກົດວ່າເປັນຜູ່ຍິ່ງດ້ວຍວິຣິຍະ ປາຣະມີຄື ມີຄວາມພຽນ ກ້າຫານ ບໍ່ທໍ້ຖອຍ ດັ່ງຈະໄດ້ເຫັນຈາກເນື້ອເລື່ອງວ່າ: ເມື່ອໄປຄ້າທາງສະເພົາ ພໍໄປເຖິງກາງມະຫາສະໝຸດ ສະເພົາແຕກ ພໍ່ຄ້າທີ່ມານຳກັນຈົມນ້ຳຕາຍໝົດ ສ່ວນມະຫາຊະນົກອຸດສາຫະລອຍຢູ່ໄດ້ເຖິງເຈັດວັນ ຈຶ່ງມີນາງເທບພະທິດາມາອຸ້ມອອກຈາກ ມະຫາສະໝຸດ ແລ້ວເອົາໄປໄວ້ທີ່ອຸທະຍານຂອງພຣະເຈົ້າແຜ່ນດິນນະຄອນມິຖິລາ ດັ່ງນີ້

ເພາະສະນັ້ນ ການອ່ານ ຫຼືຟັງນິທານເລື່ອງນີ້ ກໍຄວນຄິດເອົາ ວິຣະຍະປາຣະມີ ທີ່ມະຫາຊະນົກໄດ້ພໍ່າເພັງນັ້ນມາເປັນອາລົມ ຈຶ່ງຈະໄດ້ຊື່ວ່າເປັນຜູ່ຟັງດ້ວຍດີ ເພາະຈະໄດ້ເປັນທິບຖານຸຄະຕິແກ່ຕົນຕໍ່ໆໄປ.

ສິລາ ວິຣະວົງສ໌

ປະຣຽນ ໕

ວັນທີ 1 ຊຸຍເຍ 1932



ຮູປພຼະນະຄອນ ມິຖິລາ ທີ່ສົມເດັຈພຼະເຈົ້າໂປລະຊະ
ນົກ ພຼະຣາຊບິດາຂອງທ້າວມະຫາຊະນົກ ເສວີຍຣາຊ
ສົມບັຕິຢູ່ -

# ໑.ອາລຳພະກະຖາ (ນະມັດຖຸ)

| | | | | |
|---|---|---|---|---|
| 001 | | ສິທິກາຣິຍະນ້ອມ | ກົ້ມເກດ**ນາໂຖ** | |
| | ຖະຫວາຍແກ່ | ອົງ**ພຸດໂທ**ທັມ | ທີ່ຢຳແຢງໄຫວ້ | |
| | ກັບທັງ | **ອະຣິຍະສົງ**ເຊື້ອ | ທາຣະກາພຸດທະບາດ | |
| | ຊື່ວ່າ | **ສາມໜ່ວຍແກ້ວ** | ກອມເກົ້າສູ່ຍາມ | |
| 002 | ຂອບເມື່ອ | ອາກາດກ້າມ | ຟ້າເລື່ອນລະດູໜາວ | ພຸ້ນເຢີ |
| | | **ເຫມະກາ**ກາຍ | ລ່ວງລະດູເດືອນອ້າຍ | |
| | ອາທິດ | ໂຄຈອນຍ້າຍ | ຍາມໄຊ**ສິດທິໂຊກ** | |
| | ບັດນີ້ຂ້າຈັກ | ແຕ້ມແຕ່ງຂໍ້ | ໄຂພື້ນສາສະໜາ | |
| 003 | ຟັງເຢີ | **ການມະໂລກ**ເຊື້ອ | ຊາວໝູ່ເມືອງມະນຸດ | |
| | ເຊີນຢັ້ງ | ຍັງ**ຍານ**ແຍງ | **ໂລກະທັມ**ທັງຄ້າຍ | |
| | ໃຫ້ເອົາ | **ກາຍະກັມ**ຕັ້ງ | ປານເສົາສະເໝນຣາດ | |
| | ຈິດຢ່າ | **ອາເພດ**ເພີ້ | ພະວັງໄວ້ແວ່ນແຍງ | ແທ້ເນີ |
| 004 | ອັນນຶ່ງໃຫ້ຊ່າງ | ຣີຮ່ຳຖ້ອນ | ເຖິງປ່ອງ**ປັນຈະຂັນ** | |
| | ມັນນັ້ນເປັນດັ່ງ | ຟອງຊະລາໄຫຼ | ແມ່ປະຫວນທັງຫ້າ | |
| | | ພໍປະມານສ້ຽງ | ສູນລົງລົມຟາດ | |
| | | ເຮົາທ່ານພ້ຽງ | ພໍດ້າມດັ່ງຟອງ | ນັ້ນແລ້ວ |
| 005 | ໂລກນີ້ | ບໍ່ທ່ຽງແທ້ | ທຽມດັ່ງ**ນິຣະພານ** | ທ່ານເຮີຍ |
| | ເປັນຄືນ | ທຽວສົງສານ | **ເວທະນາ**ມີມົ້ວ | |
| | ດີທໍ່ | ແປງຂົວຂຶ້ນ | ສະຫວັນທອງເທວະໂລກ | |
| | ຍັງຈັກ | ຫາຍໂສກແຄ້ນ | ຄຳຫຍຸ້ງຫ່າງເຫີນ | ທ່ານເຮີຍ |
| 006 | ດັ່ງນັ້ນ | ເຊີນກໍ່ສ້າງ | ສະພານໃຫຍ່ຍາຫວງ | ແທ້ເນີ |
| | ຄືວ່າ | ສິນທານທັມ | ຢ່າໄລລາເວັ້ນ | |
| | ອັນນີ້ຈັກໄດ້ | ເປັນຂົວແກ້ວ | ກະໄດຄຳຄຸນມາກ | |
| | ພາເພື່ອນ | ຂ້າມຟາກພົ້ນ | ໄກເສື້ອໝູ່ມານ | |
| 007 | ແມ່ນສິ | ຍາກຍິ່ງພ້ຽງ | ຟ້າລັ່ນລົງເຫັງ | ກໍດີທ້ອນ |
| | ຢ່າຢ່ອນ | ຍັງຄວາມພຽນ | ພ່ຳເພັງພັນຊັ້ນ | |

ຂັນຕິ ປາຣະມີນັ້ນ ໃຫ້ຫຽມທັນ**ຈິດຕະຣາດ**
ທຸກາທີ່ແທ້ ຍາມຍ້າຍຍ່າງນອນ ທ່ານເຮີຍ

008 ເຮັດໃຫ້ ເປັນດັ່ງມະຫາຊະນົກທ້າວ ອີງ**ຣາຊະກຸມມານ**
ຄາວເມື່ອ ທຽວທາງ**ຊົນ** **ລະມາກ**ມີມານຕ້ອງ
ຕາມດັ່ງ ນິທານເຄົ້າ ຄະນາຈານແກ້ກ່າວ ມານັ້ນ
ໂດຍດັ່ງ ລາງເລົ່າໄວ້ ເຮົາຮູ້ຕໍ່ມາ ທ່ານເຮີຍ

009 ບັດນີ້ຮຽມຈັກ ຈາພາກພື້ນ ພຸດທະໂຄດໂຄດົມ ກ່ອນແລ້ວ
ເປັນທີ່ ຍໍແຍງຝູງ ພ່ຳເພັງພາຍຊ້ອຍ
ຄວນທີ່ ອັດສະຈັນລ້ຳ ໂລກາກົງທີບ ເຮົານີ້
ມີຢູ່ໃນ ສິບຊາດແທ້ ທຽວໃຊ້ສິ່ງເວນ ທ່ານເຮີຍ

010 ຍັງມີ **ນັກຄະເຣດ**ລ້ຳ ຮຽກຊື່**ມິຖິລາ**
**ນະຄອນ**ຫຼວງສຸດ ຊົ່ວຕາເຕັມຢ້ຽມ
ມີທັງ ນິຄົມຄ້າຍ ຄາເມດຽລະດາດ
ປະດັບລຽບລ້ອມ ນະຄອນກວ້າງເກົ່າດາວ

011 ມີທັງ ຊົນລະມາກນ້ຳ ໄຫຼຜ່ານພາຣາ
ຢູ່ທາງ ຊາວນາວາ ຕ່າງເມືອງມາເຕົ້າ
ຕັ້ງວ່າ ຍິນສະໜຸກລົ້ນ ນະຄອນຄົນໃດປຽບ
ມີທັງ ໂຮງໃຫຍ່ກວ້າງ ຫຼາຍຫ້ອງເຮືອເຮືອງ

012 ປະດັບຊໍ່ຟ້າ ມຸກກະມາດດາວຄຳ
ມຸງທອງແດງ ຫຼໍ່ຕັນຕາງຝ້າ
ມະຫາກະສັດເຈົ້າ ທົ່ງນະຄອນຄອງຣາດ
ຊື່ວ່າ ມະຫາຊະນົກກະຣາດທ້າວ ທັງຄ້າຍຂ່າວຂາມ

013 **ພູເບດ**ສ້າງ ນະຄອນໃຫຍ່ຍູກະເສີມ
ນານາພາຍ ຢູ່ໂຮງພຽງພ້ອມ
ມີທັງ **ອັດສະດອນ**ມ້າ **ມະໂນໄມ**ຮ້ອຍຄູ່
ຄວານຂີ່ລ້ຽງ ລົງລ້າງທ່ານະຄອນ

014 ຄຶກຄື້ນກ້ອງ **ຊາວເທດ**ທຽວສະເພົາ
ທັງທວຍຊົນ ຣາສະດອນແດນດ້າວ
ອຸດົມດ້ວຍ ເພັງພຽງເທວະໂລກ
ຮ້ອຍປະເທດທ້າວ ທຽວຂື້ນຂາບຖະຫວາຍ

| | | | | |
|---|---|---|---|---|
| 015 | | ຮຸ່ງຄ່ຳເຊົ້າ | ເສເນດຊຸມສະໜາມ | |
| | | ໂດຍເດີມປະຖົມ | ແຕ່ລາງລີເວັ້ນ | |
| | | ວັງຫຼວງລົ້ນ | ລະງົມຄົນເຄົ້າຄື່ນ | |
| | ທຸກທ່ວຍ | ໃຕ້ລຸ່ມຟ້າ | ຢຳທ້າວທອດທອງ | |
| 016 | ມີທັງ | **ສົມມະນາດຮູ້** | ຮຽນຮີດ**ສັບພັນຍູ** | |
| | | ຖືຄອງຄັດ | ຄ່ຽມຄົມຄວນຍ້ອງ | |
| | ສ່ຳນຶ່ງ | **ປະຕິພານ**ພ້ຽງ | **ໂພທິຍານ**ຍັງປຽບ | |
| | | ຮຸ່ງຄ່ຳເຊົ້າ | ຕາມໃຕ້ເຊື້ອເຮືອງ | |
| 017 | | ລືນາດທ້າວ | ແດນທົບເຂົາຂາມ | |
| | | ພັນເມືອງມາ | ສ່ວຍທອງທັງຄ້າຍ | |
| | | ຍູສະໜຸກເວັ້ນ | ອົນລະຫົນຫາຍໂສກ | |
| | ພຣະກຳ | ມີລູກຫຼ້າ | ສອງເຊື້ອສືບສະກຸນ | |
| 018 | | ເປັນຊາດຊັ້ນ | ຊາວເຜົ່າພົງກະສັດ | |
| | | ທັງສອງສົມ | ສິ່ງພົມພຽນແຕ້ມ | |
| | ຊື່ວ່າ | **ອະລິດຕະຖາ**ອ້າຍ | ອໍລະໄທຫຽມຣາດ | |
| | | ພຣະພໍ່ເຈົ້າ | ແພງພ້ຽງ**ພະເນດ**ຕົນ | |
| 019 | | ອົງ**ອະນຸຣາດ**ນ້ອງ | ນາມກິ່ງກຸນລະວົງ | |
| | ຊື່ວ່າ | ໂປລະຊະນະກະກຸມມານມີ | ແມ່ດຽວຫຽມທ້າວ | |
| | | ຜາກົດແທ້ | ທົງລິດທີຫຽມຣາດ | |
| | | ສອງພີ່ນ້ອງ | ຢຳໄທ້ພໍ່ພຣະອົງ | |
| 020 | | ຮຸ່ງຄ່ຳຂຶ້ນ | ທູນຣາຊະເຮັງໂຍ | |
| | | ຖະຫວາຍຫຽນທອງ | ທອດໄຫມທັນອ້າງ | |
| | | ອົງກະສັດເຈົ້າ | ໃຈຮົມຮັກລູກ | |
| | | ຮຸ່ງຄ່ຳເຊົ້າ | ຕາມຕ້ານສັ່ງສອນ | |
| 021 | | ສອງທ່ອນທ້າວ | ຮັກຮີດຮຽນຄອງ | |
| | ມີໄດ້ | ອາທອນທົງ | ໂສກແຄນຄຳຮ້ອນ | |
| | | ເທິງນານລ້ຳ | ລະດູດົນດັບຖ່າຍ | ມາແລ້ວ |
| | | ພຣະພໍ່ເຈົ້າ | ຊະຣາລ້ຳລ່ວງເຖິງ | |
| 022 | ຄົບນຶ່ງ | ພຣະສູດຍ້າຍ | ຊີວະພາກພອຍໜີ | |
| | | **ວິນຍານ**ແຍງ | ຈາກຄີງຄາເວັ້ນ | |

| | | | | |
|---|---|---|---|---|
| | | ມະຫາກະສັດເຈົ້າ | ມໍລະນາຍາມຕູດ | |
| | ຟັງຍິນ | ຟ້າກະເດື່ອງຂວ້າມ | ຊຸນລ້ອນລັ່ນສະບູ | |
| 023 | ອັນວ່າ | ພິເສດເຊື້ອ | ສອງອ່ອນ**ໄອຣະສາ** | |
| | | ຟູມຟາຍເຊັດ | ພະເນດນອງນໍາໜ້າ | |
| | ເຍື້ອນຄ່ອຍ | ພາພົນສ້າງ | ພະນົມຄໍາກວມໂກດ | |
| | | ມ້ຽນຄາບເຈົ້າ | ຈອມຊ້ອຍສິ່ງສະການ | |
| 024 | | ພ້ອມແຈກເຂົ້າ | ທານທອດ**ປະລິຂານ** | |
| | ທັງເລົ່າ | ຈໍາທໍາສິນ | ສິ່ງເມືອເມືອງຟ້າ | |
| | ພໍເມື່ອ | ເຈັດວັນຍ້າຍ | ພະນົມຫຼວງໄຫຼອອກ | |
| | ແລ້ວຈຶ່ງ | ເຜົາຄາບເຈົ້າ | ທັບອ້າງນອກນະຄອນ | |
| 025 | | ແລ້ວແຕ່ງຕັ້ງ | **ເສທາດ**ທູນຖະຫວາຍ | |
| | | ກວາມເຈດີ | ດູກພຣະຍາຍໍມ້ຽນ | |
| | | ບໍລະບວນຖ້ວນ | ຖະຫວາຍທານເທແຈກ | |
| | | ພ່ອງຫຼັ່ງລົ້ນ | ລິນທະແກ້ວສິ່ງຖະຫວາຍ | |
| 026 | ແຕ່ນັ້ນ | **ເສເນດ**ພ້ອມ | **ອະພິເສກ**ອະລິດຕະຖາ | |
| | | ເປັນພຣະຍາທົ່ງ | ແທ່ນທອງແທນໄທ້ | |
| | | ອົງ**ອະນຸຊາ**ໃຫ້ | ປອງເປັນ**ອຸປະຮາດ** | |
| | | ຕຸ້ມໄພ່ຟ້າ | ສິນຊ້ອຍຊອບຄະດີ | |
| 027 | ກໍບໍ່ | ສັນໂສກແຄ້ນ | ເຄືອງພະຣາຊະນິຍົມ | |
| | ຢູ່ທ່າງ | ສອງສິສະຖຽນ | ສໍາຣານຫາຍຮ້ອນ | |
| | | ຮອງຮອງໜ້າ | ນາງໃນນັບໝື່ນ | |
| | | ປະດັບຢູ່ລ້ອມ | ລຽນຊ້ອງສິ່ງ**ສະຫຼາ** | |
| 028 | | ຮຸ່ງຄໍ່າເຊົ້າ | ສະໜຸກທອດທານຂອງ | |
| | ສອງກໍ | ຈໍາທໍາສິນ | ຊູ່ວັນບໍ່ມີເວັ້ນ | |
| | ບັດນີ້ | ອະລໍາພະກະຖານະຄະລາບັ້ນ | ປະຖົມມາມີກ່າວ | |
| | | ສະເດັດຖີ່ຖ້ວນ | ຖະຫວາຍໄທ້ເທບພະຄຸນ | ກ່ອນແລ້ວ |

# ໔. ຍຸດທະກຳບັ້ນ

029 ບັດນີ້ຈັກກ່າວເຖິງສອງທ່ອນທ້າວ ທັງແທ່ນນະຄອນຂວາງ ກ່ອນແລ້ວ
ກໍບໍ່ ເຄືອງແຄນສັງ ຢູ່ເຢັນຫາຍຮ້ອນ
ສອງກໍ ທຳທານສ້າງ ສົມພານເພັງມາກາ
ນ້ອງພຣະ ເຈົ້າລຸ່ມຟ້າ ຢຳໄທ້ພີ່ພຣະອົງ
030 ຮຸ່ງຄໍ່າຂຶ້ນ ປະຊຸມຣາຊະການຫຼວງ
ຊະລອນລຽນຊຸນ ຢູ່ຢຳແຢງໄທວ້
ອົງອະລິດຕະຖາທ້າວ ເພິງແພງນ້ອງໜຸ່ມ
ກໍບໍ່ ຂຳຂອດຊ້ຽວ ແຂງກະດ້າງດ່າຖຽງ ທ່ານເຮີຍ
031 ແຕ່ນັ້ນຍັງມີ **ອາມາດ**ຜູ້ ພູວະນາດຄົນໃນ
ມັນນັ້ນ ໃຈຈອງວອງ ບໍ່ທ່ຽງທັມທູນລ້ຽວ
**ໂມຫາ**ຫຸ້ມ **ທີນະ**ຊົນຊາດຊົ່ວ
ສັບສໍ່ລີ້ນ ທູນທະລ້ຽວລີ້ນຊຸນ
032 ມັນກໍ່ ຄຶດໄຄ່ໄດ້ ເປັນທີ່ແສນພະຍາ
ມັນຈຶ່ງ ທູນພູມີ ກ່າວກັບ**ການລ້າວ**
ຂ້າແຕ່ ມະຫາຈັກເຈົ້າ **ຈອມທັນ**ທັງໂຜດ
ແມ່ນວ່າ ໂທດໝື່ນຊັ້ນ ເຊີນພຣະເຈົ້າຮຳເພິງ ກ່ອນທ້ອນ
033 ດຽວນີ້ ຂ້າພະບາດໄດ້ ຮູ້ແທ່ງ**ຄຳລະຫັດ**
ຂ້າຂໍ ທູນເທໂວ ແຕ່ພໍພຽງນ້ອຍ
ຍິນວ່າ ອົງອະນຸຊາເຈົ້າ ໃຈຂົມແຂງພະຣາດ
ຄຶດຈັກ ມາມອດມ້ຽນ ພຣະອົງອ້າຍນັ່ງປອງ ວ່ານ່າ
034 ແມ່ນວ່າ ຂ້າພະບາດເຈົ້າ ທູນໂທດທານຜິດ ກໍດີທ້ອນ
ບາບໍ່ ຍອມຍັງແຂງ ໂກດເຄັ້ນຄືງ້ອນ
ດຽວນີ້ ຍັງປະດັບເນື້ອ ທັງ**ພະຂັນ**ຂັດດາບ
ໂດຍດັ່ງຈັກດ່ວນຂຶ້ນ ເຖິງໄທ້ພີ່ພຣະອົງ ແທ້ແລ້ວ
035 ເມື່ອນັ້ນ ຜູ້ຜ່ານພື້ນ ພຣະຍາໃຫຍ່ອະລິດຕະຖາ
**ໂກທາ**ແຂງ ຄຽດຟູນຟາງຮ້າຍ

| | | | | |
|---|---|---|---|---|
| | ກໍບໍ່ | **ພິຈານ**ແຈ້ງ | **ຈາລະຈາ**ຖາມຖີ່ | |
| | | ທ້າວເທດຮ້ອນ | ເຫັນສົ້ນເຊື້ອຊຸນ | |
| 036 | | ອອກ**ພະໂອດ**ຕ້ານ | ມີຜ່າຜະຫຼຽງອີກ | |
| | ມັນນີ້ | ທໍລະຄຸນຄົບ | ລື່ນຄອງຄຳເຖົ້າ | |
| | ຍັງວ່າ | ເປັນກະສັດເຊື້ອ | ຊາຍດຽວລູກພໍ່ | ກັນນາ |
| | ສັງມາ | ຄຶດບໍ່ຕື້ນ | ເຊີງຊ້ຽວຂົ່ມກູ | ໄດ້ເດ |
| 037 | ສູຈິ່ງ | ຜູກທ່ານທ້າວ | ທີຣາດອັນຜິດ | ທ່ຽວເຖີ້ນ |
| | ຢ່າໃຫ້ | ມັນມາເຫັງ | ຂົ່ມເອົາອີງໄດ້ | |
| | ໃຜຜູ້ | **ອາທັງຮ້າຍ** | ເຫັນດີດອມທ່ານ | |
| | | ສູຢ່າໄວ້ | ຈຳເຂົ້າຄອກຂັງ | ແທ້ເນີ |
| 038 | ແຕ່ນັ້ນ | ຮື່ນຮື່ນຂ້າ | ຊຸນອາດ**ອາສາ** | |
| | ເຂົາກໍ | ເອົາກຸມມານ | ໃສ່ກະແຈຈຳໄສ້ | |
| | ກັບທັງ | ມິນຕີທ້າວ | **ທີຕາ**ນ້ອງນາດ | |
| | | ກະແຈຜູກຄ້ອງ | ຄຸມເຂົ້າຄອກຂັງ | |
| 039 | ແມ່ນວ່າ | ພູວະນາດນ້ອງ | ຂໍໂທດທານຜິດ | ກໍດີທ້ອນ |
| | ເຂົາບໍ່ | ຍອມຍັງຮິດ | ໂຮບເອົາພຣະອົງໄວ້ | |
| | ວັນນັ້ນ | **ອິນລະທິນ**ຮ້ອນ | ທັງແດນດາສະນັ່ນ | |
| | | ສຽງໂຫ່ໄຫ້ | ສະເທືອນເທົ້າທົ່ວນະຄອນ | |
| 040 | ເຂົາກໍ | **ສັງເວດ**ດ້ວຍ | ດອມອ່ອນອະນຸຊາ | |
| | | ຕີທວງທົບ | ທ່າວເທທັງຄ້າຍ | |
| | ຄົບໜຶ່ງ | **ສຸລິໂຍ**ຍ້າຍ | ລົງແລງແລ້ວຄ່ຳ | |
| | ຟັງຍິນ | **ວາເຍດ**ແຜ້ວ | **ຜະຫຼຽງ**ໄມ້ເມື່ອແລງ | |
| 041 | | ນັກຄະເຣດກວ້າງ | ບັງເກີດອັດສະຈັນ | |
| | ກໍບໍ່ນັນ | ເນືອງສະຫງັດ | ສິ່ງດົງດອນເປົ້າ | |
| | ເຂົາກໍ | **ໂສກາ**ເສົ້າ | ກະສັນແດດອມອ່ອນ | |
| | ມີທໍ່ | ສຽງຈີ່ຈ້ອຍ | ເຣໄຫ້ຮ່ຳຕອງ | ທ່ານແລ້ວ |
| 042 | ແຕ່ນັ້ນ | **ບຸດຕະຣາດ**ໄຫ້ | ທ້າວອ່ອນອະນຸຊາ | |
| | | ທົບທວງຂະຫຼັງ | ຢູ່ກົງໝອງໝ້ອມ | |
| | ພໍເມື່ອ | ແຖແຖມຂຶ້ນ | ພະແຂເພັງພໍທ່ຽງ | ມານັ້ນ |
| | | ບຸບພິດຕະຣາດທ້າວ | ທູນຮ້ອນຮອດພຣະອິນ | |

| | | | | |
|---|---|---|---|---|
| 043 | ບັດນີ້ | ບາບເກື້ອຍໃກ້ | ກຳເຮັ່ງຣາວີ | ຂ້າແລ້ວ |
| | ຂໍແກ່ | ພັນຕາຕອງ | ແວ່ນແຍງຍາມແຄ້ນ | |
| | ແມ່ນວ່າ | ຂ້າຫາກອາຫັງຮ້າຍ | **ເນລະຄຸນ**ຄືນຖ່ອຍ | ຈິ່ງນັ້ນ |
| | ຂໍໃຫ້ | **ທ້າວສີ່ໜ້າ** | ແທນຫ້ອງໂທດທັນ | ໄວ້ເນີ |
| 044 | ຜີວ່າ | ຂ້າຫາກຍັງທ່ຽງໝັ້ນ | ໂດຍຊື່**ສັດຈາ** | ດັ່ງນັ້ນ |
| | ຂໍໃຫ້ | **ເທພາ**ຜາຍ | ໂຜດພອນຄາວແຄ້ນ | |
| | ແມ່ນຊື່ | ໂພຍແສນຊັ້ນ | ສັດຕູມານມາບຽດ | ກໍດີທ້ອນ |
| | ຂໍໃຫ້ | ອຳນາດກຸ້ມ | ກະແຈໂສ້ຫຼູດໄລ | ແດ່ທ້ອນ |
| 045 | ຄ້ອນວ່າ | ທ້າວກ່າວແລ້ວ | ກົ້ມເກດກອນຖະຫວາຍ | |
| | ຍໍມື | ເອົາບຸນຄຸນ | ຊ່ອຍແຮງຍາມແຄ້ນ | |
| | ແຕ່ນັ້ນເລີຍເລົ່າ | **ປະຕິຫານ**ໃຫ້ | ເຫັນຄຸນຄອງປະເສີດ | |
| | | ກະແຈກແຕກໂສ້ | ໄຂມ້າງມຸ່ນທະລາຍ | |
| 046 | | ບຸບພິດຕະຣາດທ້າວ | ລຸກຮີບເຣວສະເດັດ | |
| | | ເອົາອົງຫຼົບ | ຫຼີກມານມີຮູ້ | |
| | ຝູງໝູ່ | ມົນຕີທ້າວ | ຕາມຕືນໄຫຼຫຼັ່ງ | |
| | | ລັກລອບລີ້ | ລົງຫ້ອງເມື່ອຄືນ | |
| 047 | ໃຜໄປ່ | ມີທ່ອນຮູ້ | ທ້າວລອບລົງໜີ | |
| | ອັນນີ້ | ເປັນແຕ່**ເທພາ**ຜາຍ | ຊ່ອຍບົນບັງໃຫ້ | |
| | ບາກໍ | ຊຽວຄືນພົ້ນ | ທະວານທອງທ້າວພີ່ | |
| | ຜໍ່ເຫັນ | ເດືອນດ່ວນຂ້ອນ | ຂັນຊັ້ນສ່ອງສູນ | |
| 048 | | ທ້າວຮີບຮ້ອນ | ເຣວເຮັ່ງເດີນພະລັນ | |
| | | ເຖິງນິຄົມຄາເມ | ນອກນະຄອນເຊົາຍັ້ງ | |
| | ພໍເມື່ອ | ວັນໃສພົ້ນ | **ເພລາ**ລ້ຳຮຸ່ງ ມານັ້ນ | |
| | | ທ້າວຈອດຍັ້ງ | ສອນກວ້າງກ່າວຊຸນ | |
| 049 | ເທື່ອນີ້ເຮົາຈັກ | ຄຶດແຕ່ງຕັ້ງ | ເຕົ້າໄພ່ພົນລະຊຸນ | |
| | | **ດຸນພາຍ**ຄືນ | ຍາດເມືອງມັນອ້າຍ | |
| | ເຈັບເພື່ອ | ອາຫັງຮ້າຍ | ເຫງເຮົາຄາວກ່ອນ | |
| | ກໍບໍ່ | ແລ້ວທີ່ຂ້ອງ | ຂະຫຼັງກັງວກິດຫວງ | ທ່ານເຮີຍ |
| 050 | ແຕ່ນັ້ນ | ຮື່ນຮື່ນພ້ອມ | ພົນມະຫາດໂດຍດອມ | |
| | ເຂົາກໍ | ເກນກອງຫານ | ຮີບເຣວໂຮມພ້ອມ | |

| | | | | |
|---|---|---|---|---|
| | ນັບແຕ່ | ກົງທະລັງພື້ນ | ເພນີເມືອງເມືອງສ່ວຍ | |
| | ຄັນວ່າ | ຮູ້ຂ່າວເຈົ້າ | ພົນລ້ານຫຼັ່ງເຖິງ | |
| 051 | | ນັບອ່ານໄດ້ | ໂດຍໂກດກອງຫານ | |
| | ເຂົາກໍ | ແຊວແຊວຂັນ | ຕໍ່ຕີຕາງເຈົ້າ | |
| | ນັບແຕ່ | **ບາຄານ**ເຕົ້າ | ຕອມພົນພັກເມື່ອຍ | |
| | | ສາມຂວບໄດ້ | ເດືອນຖ້ວນຖ່າຍແຖມ | |
| 052 | ພໍເມື່ອ | **ສຸພະ**ໂຍກຍ້າຍ | **ເມດ**ຮ່ວມຮຽງ**ເສົາ** | ພຸ້ນເຍີ |
| | ອາທິດ | **ໂຄຄະນາ**ເຖິງ | ທ່ຽງວັນວຽນຂຶ້ນ | |
| | | ຍາມມະຫາໄຊອ້າງ | ອົງພຸດໂທທົງແທ່ນ | |
| | | ລຶກແລ່ນເຂົ້າ | **ສູລະ**ຊ້ອຍຊອບຍາມ | |
| 053 | ແຕ່ນັ້ນ | ບຸບພິດຕະຣາດທ້າວ | ຕ້ານປ່າວປົງຊຸມ | |
| | | ທັງຣາງວັນ | ຣາຊະທານເທໃຫ້ | |
| | | ພາຍຂວາໄວ້ | ຊຸມຄານຄົນຂະໜາດ | |
| | | ເປັນປົກອົ້ງ | ແຂງຊ້ຽວຂົ່ມພົນ | |
| 054 | ອັນວ່າ | ເບື້ອງຝ່າຍຊ້າຍ | ພຣະຍາຣາຊະສົງຄາມ | |
| | | ຄຸມພົນແສນ | ຊ່ອຍຊູຊົງເຂົ້າ | |
| | ອັນທີ່ | ທົວເສິກໄວ້ | ພຣະອົງເຮົາຕ້ານຕໍ່ | |
| | ຕາບບໍ່ | ໄດ້ຍ່ຳເກົ້າ | ຊາຍບ້າບໍ່ຍ່ອມ | ງ່າຍແລ້ວ |
| 055 | ຄ້ອມວ່າ | ປຸນແຕ່ງແລ້ວ | ຄ້ອນຮ່ຳຣາງປືນ | |
| | ດີແກ່ | ພົນຕາວໄຫຼ | ຫຼັ່ງໂຮມພຽງພ້ອມ | |
| | | **ພູອະໄນ**ຂຶ້ນ | **ສັດທັນ**ພຣະຍາເວດ | |
| | ຫຼົງດູ | ດິນມືດກຸ້ມ | ພົນລ້ານຫຼັ່ງໄຫຼ | |
| 056 | | ເຈັດຂວບນີ້ | ເຖິງເທດມິຖິລາ | |
| | ແຕ່ນັ້ນ | ບາຄານຢຸດ | ໄພ່ພົນພຽງພ້ອມ | |
| | | ແລ້ວຈຶ່ງຕີກາໃຊ້ | ເຊີນເຖິງພຣະຍາພີ່ | |
| | ຜັດວ່າ | ມາຕໍ່ຊ້າງ | ກັນເຫຼັ້ນໃຫ້ສວ່າງເຫງົາ | ທ່ຽວເທີ້ນ |
| 057 | ນ້ອງນີ້ບໍ່ໄດ້ | ອາຄາດແຄ້ນ | ຄຶດຖ່ອຍທໍລະຍົດ | |
| | ສັງວ່າ | ພາທີຕັດ | ບໍ່ໄຕ່ຕອງຕົງຖ້ວນ | |
| | ເທື່ອນີ້ | ເຊີນສະເດັດສູ້ | ສົມຄາມ**ຄົດຊະຣາດ** | ດູທ້ອນ |
| | ຫຼືວ່າ | ຍັງຍ່ອນຢ້ານ | ເມືອງໃຫ້ມອບເຮົາ | ຖ່ຽວເທີ້ນ |

| | | | | |
|---|---|---|---|---|
| 058 | ຄ້ອມວ່າ | ທ້າວແຕ່ງແລ້ວ | ລົງເລກລາຍສະຫຼັກ | |
| | | ຈຳຊຸນແຂວງ | ສົ່ງທູນໄທທ້າວ | |
| | ແຕ່ນັ້ນ | **ພາຕາຮູ້** | ຂະຫຼັງທວງທົງໂກດ | |
| | ທ້າວກໍ | ຄຶດບໍ່ຖ້ອງ | ແຖມອ້າງອວດສະຫາວ | |
| 059 | ນ້ອງນີ້ | ຖ່ອຍຖ່ອຍແທ້ | ຊາດຊົ່ວຊາຍສະເຫຼົາ | ແທ້ນໍ |
| | ແໜງກູ | ຟັນຫົວເສຍ | ກໍສວ່າງເວນລາງແລ້ວ | |
| | ບັດນີ້ມັນເລົ່າ | ອາທັງອ້າງ | ເອົາພົນມາຕໍ່ | ກູນໍ |
| | ກູຈັກ | ຟັນແປ່ມ້າງ | ມັນໃຫ້ມຸ່ນກະຈອນ | ກ່ອນແລ້ວ |
| 060 | | ພຣະກ່າວແລ້ວ | ຄ້ອນຟາດກອງໄຊ | |
| | ດີແກ່ | ພົນຕາວໄຫຼ | ຫຼັ່ງມາປານນ້ຳ | |
| | | ອົງກະສັດຕ້ານ | ເສນາທັງສີ່ | |
| | ດຽວນີ້ | ເສິກຝ່າຍນ້ອງ | ເຮົາຫຸ້ມຫໍ່ຊິງ | ທ່ານເຮີຍ |
| 061 | ສູຈົ່ງ | ຈັດໄພ່ພ້ອມ | ຄາດເຄື່ອງສົມຄາມ | |
| | ກູຈັກ | ໄປຊິນສານ | ເບິ່ງມືມັນທ້າວ | |
| | | ອົງຕັດແລ້ວ | ຊຸນໂດຍດອມພະຣາດ | |
| | ເຂົາກໍ | ຈັດພວກພ້ອມ | ພົນຕື້ແຕ່ງຕົວ | |
| 062 | | ນັບອ່ານໄດ້ | ຮ້ອຍສ່ຳແສນສານ | |
| | | ໂຍທາພໍ | ໝື່ນກອງກົມຊ້າງ | |
| | | ເຂົາແຂງເຂັ້ມ | ຂັບເອົາທ້າວໜຸ່ມ | |
| | ຫຼົງດູ | ຍາບຍາບຍ້າຍ | ລົງເຕົ້າທ່າພະລານ | |
| 063 | ແຕ່ນັ້ນ | ຜູ້ຜ່ານພື້ນ | ພຣະຍາໃຫຍ່ມິຖິລາ | |
| | ບາກໍ | ເມືອເມັງຊອນ | ສັ່ງນາງໃນຫ້ອງ | |
| | ເທື່ອນີ້ | ຄຳເຄືອງແຄ້ນ | ເຖິງເຮົາຮ້ອນເຮັ່ງ | ແພງເຮີຍ |
| | ຍິນວ່າ | ເສິກຝ່າຍນ້ອງ | ນຳມ້າງມອດເມືອງ | ພີ່ນາ |
| 064 | ບັດນີ້ພີ່ຈັກ | ໄດ້ຈາກເຈົ້າ | ຍ້າຍສູ່ສົມຄາມ | ກ່ອນແລ້ວ |
| | ຕາມແຕ່ | ລວງລາຍໄປ | ບໍ່ສ່ອງຫວນເຫັນແຈ້ງ | |
| | ເປັນດັ່ງ | ສອງສະຫາຍຮ້ອນ | ກຳຜົງຜາຍຫວ່ານ | |
| | ຄັນບໍ່ | ພຸ້ນກໍພີ້ | ພໍພຽງພ່ຳສະເໜີ | ພີ່ແລ້ວ |
| 065 | ອັນນຶ່ງຫຼອນພີ່ | ມຸດມອດມ້ຽນ | ກາງແກ່ງສົມຄາມ | ກໍດີທ້ອນ |
| | ນ້ອງຈົ່ງ | ເອົາອົງຫຼົບ | ຫຼີກໂພຍໄພຮ້າຍ | |

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ